# ພຣະຄຳພີສຳລັບຫຼານນ້ອຍ

ສະເໜີ



# ໂນອາ

# ແລະເຫດການນ້ຳຖ້ວມໂລກ

ຂຽນໂດຍ: Edward Hughes

ແຕ້ມຮູບໂດຍ: Byron Unger; Lazarus
Alastair Paterson

ດັດແກ້ໂດຍ: M. Maillot; Tammy S.

ແປໂດຍ: Christian Lingua

ຈັດພິມໂດຍ: Bible for Children
www.M1914.org

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ໂນອາແມ່ນຜູ້ທີ່ນະມັດສະການພຣະເຈົ້າ.
ຄົນອື່ນໆໄດ້ກຽດຊັງ
ແລະບໍ່ເຊື່ອຟັງພຣະເຈົ້າ.
ມີວັນໜຶ່ງພຣະເຈົ້າໄດ້ກ່າວບ
າງຢ່າງທີ່ໜ້າຕົກໃຈຫຼາຍ ຄື:
“ເຮົາຈະທຳລາຍໂລກອັນຊົ່ວຊ້ານີ້,





ມີແຕ່ຄອບຄົວຂອງເຈົ້າເທົ່ານັ້ນທີ່ຈະໄດ້ພົ້ນ.”

ພຣະເຈົ້າໄດ້ກ່າວເຕືອນໂນອາກ່ຽວກັບນ້ຳຖ້ວມຄັ້ງ
ໃຫຍ່ທີ່ກຳລັງຈະມີມາ. ພຣະເຈົ້າໄດ້ສັ່ງໂນອາວ່າ,
"ຈົ່ງສ້າງເຮືອໄມ້ລຳໃຫຍ່, ໃຫຍ່ພໍສຳລັບຄອບຄົວຂອງເຈົ້າ
ແລະສັດທັງຫຼາຍ" ພຣະເຈົ້າຊົງແນະນຳແກ່ໂນອາຢ່າງຊັດເຈນ
ວ່າຈະສ້າງເຮືອແນວໃດແດ່. ໂນອາມີວຽກເຮັດຫຼາຍແທ້ໆ!





ປະຊາຊົນພາກັນກ່າວເຍາະເຢີ້ຍໂນອາ

ໃນຂະນະທີ່ລາວພວມອະທິບາຍເຖິງ

ສາເຫດທີ່ຕົນເອງສ້າງເຮືອໃຫຍ່.
ຝ່າຍໂນອາກໍສ້າງໄປເລື້ອຍໆ. ນອກນັ້ນ
ເພິ່ນຍັງບໍ່ໄດ້ຢຸດເວົ້າເລື່ອງພຣະເຈົ້າສູ່ພ
ວກເຂົາຟັງ ແຕ່ກໍບໍ່ມີໃຜຟັງເພິ່ນ.



ໂນອາມີຄວາມເຊື່ອອັນໃຫຍ່.
ເພິ່ນເຊື່ອພຣະເຈົ້າ ເຖິງແມ່ນວ່າ
ແຕ່ກ່ອນຈະບໍ່ເຄີຍມີຝົນຕົກລົງມາ
ເລີຍກໍຕາມ. ຕໍ່ມາອີກບໍ່ດົນ,
ເຮືອກໍພ້ອມສຳລັບຂົນທຸກຢ່າງຂຶ້ນ.

ບັດນີ້ ໂຕສັດກໍພາກັນອົບພະຍົບເຂົ້າມາໃນເຮືອ.
ພຣະເຈົ້າໄດ້ນໍາເອົາສັດທຸກຊະນິດ ແນວລະຄູ່ເຂົ້າມາໄວ້ໃນເຮືອ.
ມີນົກໃຫຍ່ ແລະນົກນ້ອຍ, ທັງສັດນ້ອຍ
ແລະສູງພາກັນຍ່າງເຂົ້າຫາເຮືອ.





ປະຊາຊົນພາກັນຮ້ອງໝິ່ນປະໝາດໂນອາໃນຂະນະທີ່
ລາວເອົາສັດຂຶ້ນເທິງເຮືອ.
ພວກເຂົາຍັງສືບຕໍ່ເຮັດບາບຕໍ່ສູ້ພຣະເຈົ້າ.
ພວກເຂົາບໍ່ໄດ້ຮ້ອງຂຶ້ນໄປເທິງ
ເຮືອກັບໂນອາເລີຍ.



ໃນທີ່ສຸດ, ສັດ ແລະນົກທັງໝົດກໍຂຶ້ນໄປເທິງເຮືອ.
ພຣະເຈົ້າຊົງເຊື້ອເຊີນໂນອາວ່າ,

“ເຈົ້າ
ແລະຄອບຄົວຂອງເຈົ້າ
ຈົ່ງເຂົ້າມາໃນເຮືອສາ.”
ໂນອາ, ເມຍຂອງລາວ,
ລູກຊາຍຂອງລາວອີກສາມຄົນ
ພ້ອມດ້ວຍເມຍຂອງພວກເຂົາ
ກໍເຂົ້າໄປໃນເຮືອ.
ແລ້ວພຣະເຈົ້າກໍອັດປະຕູ!



ຫຼັງຈາກນັ້ນ ຝົນກໍຕົກ.
ຝົກຕົກລົງເທິງແຜ່ນດິນເປັນເວລາສີ່ສິບວັນ
ສີ່ສິບຄືນ.



ນ້ຳໄດ້ຖ້ວມໄປທົ່ວທຸກເມືອງ ແລະໝູ່ບ້ານ.
ເມື່ອຝົນຢຸດ, ແມ່ນແຕ່ຍອດພູສູງກໍຍັງຈົມຢູ່ໃຕ້ນ້ຳ.
ທຸກຢ່າງທີ່ຫາຍໃຈໄດ້ແມ່ນຕາຍໝົດ.



ໃນຂະນະທີ່ນ້ຳຫຼາຍຂຶ້ນ,
ເຮືອກໍລອຍໄປມາເທິງໜ້ານ້ຳ.
ພາຍໃນເຮືອອາດຈະມືດ,
ອາດມີຊຸມມີບໍ່
ແລະອາດຈະເປັນຕາຢ້ານຫຼາຍ.
ແຕ່ເຮືອນັ້ນໄດ້ປົກປ້ອງໂນອາ
ໃຫ້ລອດຈາກນ້ຳຖ້ວມ.



ຫຼັງຈາກນ້ຳຖ້ວມຢູ່ຢ່າງນັ້ນເປັນເວລາຫ້າເດືອນ,
ພຣະເຈົ້າກໍໄດ້ສົ່ງລົມຮ້ອນມາ. ນ້ຳຄ່ອຍໆ
ຫລຸດລົງ ຈົນເຮືອໂນອາໄປຄ້າງທີ່ຍອດພູອາຣາຣັດ.
ຫຼັງຈາກທີ່ນ້ຳຫລຸດລົງແລ້ວ,
ໂນອາຍັງພັກຢູ່ໃນເຮືອອີກເປັນເວລາສີ່ສິບວັນ.

ໂນອາໄດ້ເປີດປະຕູປ່ອງຢ້ຽມແລ້ວໂຕກາ ແລະນົກກາງແກອອກໄປ.
ແຕ່ມັນບໍ່ສາມາດພົບພື້ນດິນແຫ້ງທີ່ສະອາດ,
ນົກກາງແກຶຈ່ງບິນກັບມາຫາໂນອາຄືນ.



ອີກອາທິດໜ່ງຕໍ່ມາ,
ໂນອາກໍລອງອີກ. ບັດນີ້
ມັນບິນກັບມາພ້ອມກັບໃບໝາກ
ກອກເທດໃນປາກຂອງມັນ.
ອີກອາທິດໜ່ງຕໍ່ມາ
ໂນອາຮູ້ວ່ານໍ້າແຫ້ງແລ້ວແນ່ນອນ
ເພາະນົກກາງແກທີ່ເພິ່ນປ່ອຍອອກ
ໄປອີກນັ້ນ ມັນບໍ່ບິນກັບມາເລີຍ.

ພຣະເຈົ້າຊົງບອກໂນອາວ່າ ມັນເຖິງເວລາແລ້ວທີ່ຈະຕ້ອງອອກຈາກເຮືອ.
ທັງໂນອາ ແລະຄອບຄົວຂອງລາວກໍໄດ້ປ່ອຍສັດທັງຫຼາຍອອກຈາກເຮືອ.



ໂນອາມີຄວາມຮູ້ສຶກຢາກຂອບພຣະຄຸນພຣະເຈົ້າຫຼາຍ!
ເພິ່ນໄດ້ສ້າງແທ່ນບູຊາໃໝ່ຂຶ້ນມາ
ແລະໄດ້ນະມັດສະການພຣະເຈົ້າ
ຜູ້ໄດ້ຊ່ອຍເພິ່ນ



ແລະຄອບຄົວໃຫ້ພົ້ນຈາກເ
ຫດນ້ຳຖ້ວມໂລກຄັ້ງນີ້.


พระเจ้าได้
ปะทานพระสัมยา
พิเสดแก่โนอา.
พระอิงสัมยาว่าจะบ่
พิพาภสาโทดบาบຂອງ
มะนุดถ้วยภานเร็ดให้น้ำถ้วม
โลภนี้อีภ.
พระเจ้าได้ปะทานเถื่องໝายຄື
สายรุ้ง ให้เป็นสัมยาลัภ
แห่งพระสัมยาຂອງพระอิง.

ແລ້ວໂນອາ
ແລະຄອບຄົວຂອງລາວກໍພົບບ່ອນຕັ້ງຖິ່ນ
ຖານໃໝ່ຫຼັງຈາກນໍ້າຖ້ວມໂລກ.
ຕໍ່ມາອີກບໍ່ດົນ, ລູກຫຼານຂອງໂນອາກໍຂະຫຍາຍ
ອອກໄປເຕັມທົ່ວແຜ່ນດິນໂລກ.
ທຸກຊົນຊາດເທິງແຜ່ນດິນໂລກນີ້
ແມ່ນມາຈາກໂນອາ



ແລະລູກຫຼານຂອງລາວ.

ໂນອາ ແລະເຫດການນ້ຳຖ້ວມໂລກ

ເລື່ອງໃໝ່ງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ປະຖົມມະການ ບົດທີ 6-10

“ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ.”
ເພງສັນລະເສີນ 119:130


ຈິບບໍລິບູນ

ເລື່ອງລາວໃນພຣະຄໍາພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶ່ງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ
ຈິ່ງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍ່ເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງຫຼານທັນທີ,
ແລະຫຼານຈະໄດ້ຢູ່ນໍາພຣະອົງຕະຫຼອດໄປເປັນນິດ.

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນນຶ່ງຂ້ານ້ອຍຈະໄດ້ຢູ່ນໍາພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ອຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄໍາພີ ແລະສົນທະນານໍາພຣະເຈົ້າທຸກວັນ!    ໂຢຮັນ 3:16